**ກອງປະຊຸມ "ເຜີຍແຜ່ຜົນການສຳຫຼວດການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ 2021"**






ໃນວັນທີ 18 ສິງຫາ 2022 ທີ່ຫ້ອງປະຊຸມໃຫຍ່ຊັ້ນ VII ທຫລ ໄດ້ຈັດກອງປະຊຸມ ເຜີຍແຜ່ຜົນການສຳຫຼວດການເຂົ້າເຖິງການບໍລິການທາງດ້ນການເງິນໃນ ສປປ ລາວ ປະຈຳປີ 2021 ໃຫ້ກຽດເປັນປະທານໂດຍທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ເຊິ່ງມີຕາງໜ້າຈາກອົງການ UNCDF, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການເຂົ້າຮ່ວມຢ່າງພ້ອມພຽງ.

ການສຳຫຼວດການເຂົ້າເຖິງການບໍລິການທາງດ້ານການເງິນໃນຄັ້ງນີ້ ແມ່ນຖືເປັນຄັ້ງທີ 2 ຖັດຈາກການສຳຫຼວດ (ຟິນສໂຄບ) FinScope ໃນປີ 2014. ຜົນການສຳຫຼວດໃນຄັ້ງນັ້ນໄດ້ຊີ້ໃຫ້ເຫັນວ່າ ອັດຕາສ່ວນຂອງປະຊາກອນຜູ້ໃຫຍ່ທີ່ເຂົ້າເຖິງການບໍລິການທາງດ້ານການເງິນທັງໝົດ 75% (ລວມທີ່ເປັນທາງການ ແລະ ບໍ່ເປັນທາງການ) ແລະ ບໍ່ສາມາດເຂົ້າເຖິງການບໍລິການທາງດ້ານການເງິນຮູບແບບໃດເລີຍ 25%. ໃນນັ້ນ, ການອອມເງິນແມ່ນຜະລິດຕະພັນທີ່ເຂົ້າເຖິງຫຼາຍກວ່າໝູ່, ຕໍ່ມາແມ່ນການຊຳລະ, ການໂອນເງິນ, ສິນເຊື່ອ ແລະ ປະກັນໄພຕາມລຳດັບ. ການເງິນທີ່ບໍ່ເປັນທາງການຍັງມີບົດບາດສຳຄັນໃນການສະໜອງການບໍລິການທາງດ້ານການເງິນ ຊຶ່ງສະແດງອອກໃນອັດຕາສ່ວນຂອງປະຊາກອນຜູ້ໃຫຍ່ ມີການນຳໃຊ້ການບໍລິການທາງດ້ານການເງິນທີ່ບໍ່ເປັນທາງການກວມ 28%. ການເຂົ້າເຖິງການບໍລິການທາງດ້ານການເງິນແມ່ນມີລັກສະນະກວ້າງຂວາງ (ລະດັບການເຂົ້າເຖິງແມ່ນສູງ) ແຕ່ຍັງບໍ່ທັນໄປສູ່ລວງເລິກ (ບໍ່ໄດ້ນຳໃຊ້ຫຼາຍຜະລິດຕະພັນ). ນອກຈາກນີ້, ການເຂົ້າເຖິງການບໍລິການທາງດ້ານການເງິນ ແມ່ນຍັງເປັນບັນຫາສຳລັບຄົວເຮືອນໃນ

ເຂດຊົນນະບົດ ແລະ ຄົວເຮືອນທີ່ມີລາຍຮັບຕ່ຳ ຊຶ່ງສະແດງອອກຜູ້ທີ່ບໍ່ສາມາດເຂົ້າເຖິງການບໍລິການທາງດ້ານການເງິນໄດ້ເລີຍ ກວມ 25%. ການເຂົ້າເຖິງການບໍລິການທາງດ້ານການເງິນສຳລັບເພດຍິງ ແລະ ເພດຊາຍ ແມ່ນບໍ່ແຕກໂຕນກັນຫຼາຍ ຊຶ່ງເພດຍິງແມ່ນມີອັດຕາການເຂົ້າເຖິງ 76% ແລະ ເພດຊາຍ 72% ຕາມລຳດັບ.




**ຂ່າວ ແລະ ພາບໂດຍ: ນ. ທິດສະບາ ທຳມະວົງສິງ**

*ຮັກບ້ານເກີດເມືອງນອນໃຊ້ຈ່າຍທອນເປັນເງິນກີບ*